## ການປະຕິບັດກະສິກຳທີ່ດີ ຂອງອາຊຽນແມ່ນຫຍັງ?

ອາຊຽນໄດ້ໃຫ້ການຕົກລົງກັນ ໃນການສ້າງຂີດຄວາມສາມາດ ແລະ ການແຂ່ງຂັນດ້ານອາຫານ ແລະ ຜົນຜະລິດກະສິກຳ ຂອງຕົນ ເພື່ອເຮັດໃຫ້ພາກພື້ນນີ້ ກາຍເປັນຜູ້ນຳດ້ານການຜະລິດ ໃນຕະຫຼາດສາກົນ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ໄດ້ມີຄວາມພະຍາຍາມຫຼາຍຢ່າງ ລວມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບ ແລະ ຂະບວນການ ຄວບຄຸມອາຫານ ເພື່ອຮັບປະກັນດ້ານຄຸນນະພາບ ແລະ ຄວາມປອດໄພ. ມາດຕະຖານກະສິກຳທີ່ດີອາຊຽນ ແມ່ນມາດຕະຖານ ສຳລັບການປະຕິບັດກະສິກຳທີ່ດີ ຊຶ່ງໄດ້ສ້າງຂຶ້ນມາ ແລະ ຮັບຮອງເອົາ ເພື່ອຍົກລະດັບການຜະລິດພືດຜັກ ແລະ ໝາກໄມ້ສົດ ໃຫ້ເປັນມາດຕະຖານດຽວກັນ ໃນບັນດາປະເທດສະມາຊິກທັງໝົດ. ໄດ້ມີການກຳນົດເອົາຂອບເຂດຄວາມສຳຄັນຢູ່ 4 ຢ່າງ: (1) ຄວາມປອດໄພຂອງຜົນຜະລິດ; (2) ການຈັດການທາງດ້ານສິ່ງແວດລ້ອມ; (3) ສຸຂະພາບ, ຄວາມປອດໄພ ແລະ ສະຫວັດດີການສັງຄົມ ຂອງຜູ້ອອກແຮງງານ; ແລະ (4) ຄຸນນະພາບຂອງຜົນຜະລິດ. ຊຶ່ງມາດຕະຖານຂອງພາກພື້ນ ມັນຈະຍັງເປັນການເພີ່ມຜະລິດຕະພາບຂອງການຜະລິດ ແລະ ເຂົ້າເຖິງຕະຫຼາດຫຼາຍຂື້ນ, ພ້ອມດຽວກັນນັ້ນ, ມັນກໍ່ຍັງຈະເພີ່ມການຄ້າຂາຍ ແລະ ປັບປຸງຊີວິດການເປັນຢູ່ ຂອງຊາວກະສິກອນ ຊຶ່ງກວມເອົາປະຊາກອນສ່ວນໃຫຍ່ຢູ່ໃນບັນດາປະເທດສະມາຊິກອາຊຽນ.

## What is ASEAN GAP?

ASEAN is committed to enhance its international competitiveness of food and agriculture produces to enable the region to be the leading producer in global market. Various efforts have been undertaken including the enhancement of food control systems and procedures to assure the food safety and quality. ASEAN GAP, a standard for good agricultural practices, has been developed and adopted to standardize agricultural practices handling fresh fruit and vegetables in the ASEAN member countries and facilitate their trade within and beyond the region. It addresses four important areas: (i) food safety; (ii) environmental management; (iii) worker health, safety and welfare; and (iv) produce quality. With this regional standard, it will help to increase productivity and product marketability, boost trade and improve the welfare of farmers who make up the majority of population in ASEAN countries.

Source: The Association of Southeast Asian Nations (ASEAN)

## ອົງການທີ່ກ່ຽວຂ້ອງ
## Involved Agencies






## ຂໍ້ມູນຕິດຕໍ່:
## Contact information:

- **ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ**
  ປະຕູໄຊ, ຖະໜົນລ້ານຊ້າງ, ນະຄອນຫຼວງວຽງຈັນ, ສປປ ລາວ
  ຕູ້ໄປສະນີ: 811, ໂທ: (856 - 21) 412350, ແຟັກ: (856 - 21) 412349
  Lao PDR's Department of Agriculture (DOA LA), Ministry of Agriculture and Forestry
  Patuxay Square, Lanexang Ave, Vientiane Capital, Lao PDR
  P.O Box: 811, Tel: (856 - 21) 412350, Fax: (856 - 21) 412349
  http://www.doamaf.net
- **ສຳນັກງານຄວາມຮ່ວມມືເພື່ອການພັດທະນາລະຫວ່າງປະເທດ ຂອງປະເທດໄທ (ໄທກາ)**
  Thailand International Development Cooperation Agency (TICA)
  The Government Complex, Building B (South Zone), 8th Fl., Chaengwattana Rd.,
  Laksi, Bangkok 10210, Thailand.
  http://www.tica.thaigov.net/main
- **ອົງກອນຄວາມຮ່ວມມືລະຫວ່າງປະເທດຂອງເຢຍລະມັນ ປະຈຳປະເທດໄທ (ຈີໄອແຊັດ)**
  ແຜນຄວາມຮ່ວມມືສາມຝ່າຍປະເທດໄທ - ເຢຍລະມັນ
  Deutsche Gesellschaft für Internationale Zusammenarbeit (GIZ) GmbH
  German International Cooperation
  Thai-German Trilateral Cooperation Programme
  GIZ Office Bangkok 193/63 Lake Rajada Office Complex, 16th Fl., New Ratchadapisek-Rama IV Rd.,
  Klongtoey, Bangkok 10110, Thailand.
  http://www.thai-german-cooperation.info

Lao-Thai-German Trilateral Cooperation







# ໂຄງການ "ສ້າງຄວາມເຂັ້ມແຂງໃຫ້ແກ່ການຜະລິດກະສິກຳທີ່ດີ ຢູ່ ສປປ ລາວ" (ຄວາມຮ່ວມມືສາມຝ່າຍ ລາວ-ໄທ-ເຢຍລະມັນ)

## Strengthening National Good Agricultural Practices (GAP) in Lao PDR Project
(Lao-Thai-German Trilateral Cooperation)

**ໄລຍະເວລາຈັດຕັ້ງປະຕິບັດ: ພຶດສະພາ 2012 - ເມສາ 2014**
**ທີ່ຕັ້ງຂອງໂຄງການ: ນະຄອນຫຼວງວຽງຈັນ ແລະ ແຂວງ ວຽງຈັນ, ສປປ ລາວ**

**Implementing Period :** May 2012- April 2014
**Project Location :** Vientiane Province and Vientiane Capital, Lao PDR

## ສະພາບບັນຫາທີ່ມີຢູ່ໃນປັດຈຸບັນ ແມ່ນຫຍັງ? What is the problem situation?

ໃນຍຸກປັດຈຸບັນ ຊາວກະສິກອນລາວໄດ້ປະເຊີນໜ້າກັບສິ່ງທ້າທາຍຫຼາຍຢ່າງ ໂດຍສະເພາະແມ່ນ ການເຂົ້າເປັນສະມາຊິກອົງການການຄ້າໂລກ ໃນປີ 2013 ແລະ ການກະກຽມເຂົ້າເປັນສະມາຊິກການຄ້າເສລີຂອງອາຊຽນ ໃນປີ 2015. ໃນສະພາບການດັ່ງກ່າວ ໜຶ່ງໃນອຸປະສັກທີ່ສຳຄັນສຳລັບການພັດທະນາຕະຫຼາດພືດຜັກ ແລະ ໝາກໄມ້ສົດຂອງລາວ ແມ່ນຍັງບໍ່ທັນມີລະບົບກະສິກຳທີ່ດີແຫ່ງຊາດ (Lao GAP) ທີ່ເຊື່ອມໂຍງມາດຕະຖານກະສິກຳທີ່ດີຂອງອາຊຽນ ເຊິ່ງເປັນມາດຕະຖານທີ່ຈະນຳໃຊ້ເຂົ້າໃນການຄ້າຂາຍພືດຜັກ ແລະ ໝາກໄມ້ສົດ ຢູ່ໃນພາກພື້ນ ໃນປີ 2015. ການທີ່ບໍ່ມີລະບົບກະສິກຳທີ່ດີແຫ່ງຊາດ ຈະເຮັດໃຫ້ການແຂ່ງຂັນ ແລະ ໂອກາດ ຂອງຊາວກະສິກອນ ແລະ ຜູ້ຜະລິດຂະໜາດນ້ອຍຂອງປະເທດເຮົາ ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທີ່ມີການເພີ່ມຂຶ້ນຢ່າງວ່ອງໄວ.

ການທີ່ມີລະບົບກະສິກຳທີ່ດີແຫ່ງຊາດ ທີ່ສອດຄ່ອງກັບມາດຕະຖານກະສິກຳທີ່ດີ ຂອງອາຊຽນ ຈະຊ່ວຍໃຫ້ປະເທດຂອງພວກເຮົາກ້າວໄປມີການຢັ້ງຢືນກະສິກຳທີ່ດີສຳລັບຕະຫຼາດພາຍໃນ ແລະ ຕະຫຼາດຕ່າງປະເທດ. ຊາວກະສິກອນ ແລະ ຜູ້ປະກອບການຂະໜາດນ້ອຍ ຈະສາມາດວິເຄາະ ແລະ ຍົກລະດັບການຜະລິດຂອງເຂົາເຈົ້າໃຫ້ສອດຄ່ອງກັບມາດຕະຖານທີ່ວາງໄວ້ ພ້ອມທັງຍົກລະດັບທາງດ້ານປະລິມານ ແລະ ຄຸນນະພາບຂອງຜົນຜະລິດກະສິກຳ ພວກເຂົາຈະສາມາດເຂົ້າເຖິງລະບົບຢັ້ງຢືນກະສິກຳທີ່ດີຂອງປະເທດເຮົາ ເພື່ອໃຫ້ສາມາດແຂ່ງຂັນໄດ້ ແລະ ສອດຄ່ອງກັບເງື່ອນໄຂຄວາມຮຽກຮ້ອງຕ້ອງການຂອງຕະຫຼາດພາຍໃນ ແລະ ຕະຫຼາດພາກພື້ນ.

Lao farmers are facing growing challenges from current developments towards the integration into the ASEAN common market in 2015 as well as the World Trade Organization (WTO) full membership in 2013. In this context, one of the core obstacles for the Lao fruit and vegetable market development is the nonexistence of a national Good Agricultural Practice (GAP) system harmonized with the ASEAN GAP standard which will be applied in fruit and vegetable trading in the region in 2015. Without a national GAP system, the competitiveness and livelihood opportunity of Lao local farmers and smallholders are not optimized according to the rapidly growing demand.

A functioning national GAP system in line with the ASEAN GAP standard will help the country to move forward with GAP certification for both domestic and export markets. Lao local farmers and small holders will be able to analyze and optimize their production processes according to the set standards and increase both quantity and quality of their agricultural produce. They will be able to access the national GAP certification in order to compete according to both domestic and regional market demand.

## ໂຄງການສ້າງຫຍັງ ? What does the project produce?

ໂຄງການໄດ້ສະໜັບສະໜູນ ກົມປູກຝັງ ຂອງ ສປປ ລາວ ເພື່ອພັດທະນາ:
- ສ້າງຕັ້ງໜ່ວຍງານຢັ້ງຢືນ ຂອງ ສປປ ລາວ Lao Certification Body (LCB) ໃຫ້ສາມາດຄຸ້ມຄອງລະບົບການຢັ້ງຢືນ Lao GAP ຕາມເງື່ອນໄຂມາດຕະຖານສາກົນ ISO/IEC 17065.
- ສ້າງຄູ່ມືແນະນຳການຈັດຕັ້ງປະຕິບັດມາດຕະຖານກະສິກຳທີ່ດີ ຂອງ ສປປ ລາວ ສຳລັບພືດຜັກ ແລະ ໝາກໄມ້ສົດ ໃຫ້ສອດຄ່ອງກັບມາດຕະຖານກະສິກຳທີ່ດີ ຂອງອາຊຽນ (ASEAN GAP).
- ພັດທະນາບຸກຄະລາກອນທີ່ມີຄວາມຮູ້ ຄວາມສາມາດ ໃຫ້ສາມາດຈັດຕັ້ງປະຕິບັດຂະບວນການກວດກາ ແລະ ຢັ້ງຢືນ Lao GAP.
- ສ້າງກິດຈະກຳປະຊາສຳພັນ ແລະ ສົ່ງເສີມລະບົບການຢັ້ງຢືນ Lao GAP ໃຫ້ແກ່ຊາວກະສິກອນ ແລະ ຜູ້ຜະລິດ ເພື່ອໃຫ້ໄດ້ຮັບໃບຢັ້ງຢືນ Lao GAP

The project supports the Department of Agriculture of Lao PDR to develop:
- Functioning organizational/institutional structure of Lao Certification Body (LCB) to manage Lao national GAP system following ISO/IEC 17065 requirements
- Standard operating procedure of Lao national GAP for fresh fruit and vegetable in line with ASEAN GAP
- Qualified human resources to handle Lao GAP inspection and certification processes
- Set of practical Lao GAP certification promotion activities for famers, operators and consumers

## ໃຜຈະໄດ້ຮັບຜົນປະໂຫຍດ ? Who will benefit?

- ກຸ່ມເປົ້າໝາຍ1: ໜ່ວຍງານຢັ້ງຢືນ (LCB), (ລະດັບຢັ້ງຢືນ)
- ກຸ່ມເປົ້າໝາຍ2: ພະນັກງານພະແນກກະສິກຳແລະປ່າໄມ້, ແລະພະນັກງານສູນພັດທະນາກະສິກຳສະອາດ (ລະດັບສົ່ງເສີມ, ຝຶກອົບຮົມ, ແລະລະບົບຄວບຄຸມພາຍໃນ)
- ຜູ້ໄດ້ຮັບຜົນປະໂຫຍດສຸດທ້າຍ: ຊາວກະສິກອນ, ກຸ່ມຊາວກະສິກອນ, ຜູ້ຜະລິດ, ເຈົ້າຂອງຟາມ ແລະ ຜູ້ປະກອບການ

**Target Group 1:** Newly established Lao Certification Body (LCB) (Certification system level)
**Target Group 2:** Staff of Provincial Agriculture and Forestry Office (PAFO) and Clean Agriculture Development Center (CADC) (Extension, training and internal control system support level)
**Final beneficiary:** Farmers, farmer group, producers, farm owners and operators

## ຮູບແບບຜົນໄດ້ຮັບຂອງໂຄງການ
## Project Results Model

### ຜົນກະທົບ Impacts



ຂີດຄວາມສາມາດໃນການແຂ່ງຂັນຂອງຊາວກະສິກອນລາວ ແລະ ຜູ້ຜະລິດຂະໜາດນ້ອຍພືດຜັກ ແລະ ໝາກໄມ້ສົດ ໃນພື້ນທີ່ເປົ້າໝາຍຂອງໂຄງການ ແມ່ນສູງຂຶ້ນ ເພື່ອຕອບສະໜອງຜົນຜະລິດທີ່ໄດ້ຮັບການຢັ້ງຢືນກະສິກຳທີ່ດີ ຕາມຄວາມຕ້ອງການຂອງຕະຫຼາດໂດຍຜ່ານການພັດທະນາລະບົບການຢັ້ງຢືນກະສິກຳທີ່ດີແຫ່ງຊາດ.
Through functioning national GAP system, the competitiveness of Lao farmers and small holders in fresh fruit & vegetable business in the pilot areas has increased and met the market demand of GAP certified produce

### ຜົນໄດ້ຮັບ Outcomes

Board of Director | Certification committee | Certification body

ໂຄງຮ່າງການຈັດຕັ້ງ ອົງກອນ/ສະຖາບັນ ຂອງໜ່ວຍງານຢັ້ງຢືນ ຖືກສ້າງຕັ້ງຂຶ້ນ ແລະ ສາມາດເຮັດໜ້າທີ່ໃນການສະໜັບສະໜູນລະບົບກະສິກຳທີ່ດີ ແລະ ແຜນພັດທະນາລະບົບກະສິກຳທີ່ດີແຫ່ງຊາດ ໄດ້ຖືກພັດທະນາຂຶ້ນ.
**Organizational/institutional structure of LCB** is set up and functioning to support the establishment of Lao GAP system, with development plan in place

ມາດຕະຖານກະສິກຳທີ່ດີແຫ່ງຊາດ (Lao GAP) ແລະ ຄູ່ມືຈັດຕັ້ງປະຕິບັດມາດຕະຖານກະສິກຳທີ່ດີແຫ່ງຊາດ ກ່ຽວກັບພືດຜັກ ແລະ ໝາກໄມ້ສົດ ໄດ້ຮັບການພັດທະນາຂຶ້ນ ສອດຄ່ອງຕາມມາດຕະຖານກະສິກຳທີ່ດີ ຂອງອາຊຽນ.
**Lao GAP Standard and Standard Operating Procedures (SOP)** for fresh fruit and vegetable in line with ASEAN GAP is established and in place

ບຸກຄະລາກອນ ແລະ ອົງກອນທີ່ມີຄວາມຮູ້ຄວາມສາມາດໃນການຄຸ້ມຄອງ, ການກວດກາ ແລະ ການຢັ້ງຢືນ Lao GAP ແລະ ສະໜັບສະໜູນການສົ່ງເສີມດ້ານວິຊາການຢູ່ໃນພື້ນທີ່ເປົ້າໝາຍ.
**Competent human resources and authority** to manage Lao GAP inspection & certification and support pilot GAP extension work are in place

ຊາວກະສິກອນ ແລະ ຜູ້ປະກອບການ ໃນພື້ນທີ່ເປົ້າໝາຍໄດ້ນຳໃຊ້ ແລະ ໄດ້ຮັບໃບຢັ້ງຢືນ Lao GAP ແລະ ຜູ້ຊື້ກໍ່ຍອມຮັບຜົນຜະລິດທີ່ຜ່ານການຢັ້ງຢືນ.
**Farmers and operators in pilot areas** has applied and obtained Lao GAP certificate and domestic buyers have accepted Lao GAP certified produce

### ໝາກຜົນ Outputs

- ໂຄງຮ່າງການຈັດຕັ້ງອົງກອນສຳລັບໜ່ວຍງານຢັ້ງຢືນ.
- ພາລະບົດບາດ ຂອງໜ່ວຍງານຢັ້ງຢືນ (LCB).
- ແຜນພັດທະນາບຸກຄະລາກອນ ແລະ ໜ້າທີ່ຮັບຜິດຊອບ ເພື່ອຮັບຜິດຊອບວຽກດ້ານກະສິກຳທີ່ດີ.
- ແຜນພັດທະນາລະບົບການຢັ້ງຢືນໜ່ວຍງານ (LCB) ເພື່ອການດຳເນີນງານໄດ້ຢ່າງສົມບູນ ແລະ ເຊື່ອໝັ້ນໄດ້.

- Organizational structure of Lao Certification Body (LCB)
- Terms of References (ToR) for LCB
- Plan for personnel allocation and job descriptions
- Roadmap towards fully function and trustworthy LCB system

- ຄູ່ມືຈັດຕັ້ງປະຕິບັດມາດຕະຖານກະສິກຳທີ່ດີ (Lao GAP) ລວມທັງລະບຽບຫຼັກການ ແລະ ວິທີການການປະຕິບັດວຽກງານສຳລັບການກວດກາ ແລະ ການຢັ້ງຢືນ ສອດຄ່ອງກັບມາດຕະຖານກະສິກຳທີ່ດີ ຂອງອາຊຽນ.
- ກາໝາຍ ແລະ ລະບຽບການນຳໃຊ້ກາໝາຍສຳລັບ Lao GAP.
- ເຄື່ອງມືສຳລັບຝຶກອົບຮົມການກວດກາ ແລະ ການ ຢັ້ງຢືນ Lao GAP ໄດ້ຮັບການສ້າງຂຶ້ນມາ

- Lao GAP standard operating procedure manual including regulations and work instruction for certification and inspection in line with ASEAN GAP
- Lao GAP seal and seal use regulations
- Training materials for Lao GAP inspection and certification

- ແຜນພັດທະນາບຸກຄະລາກອນສຳລັບການດຳເນີນການເຮັດວຽກໃນລະບົບການຜະລິດກະສິກຳທີ່ດີ (Lao GAP).
- ຄູ່ມືຝຶກອົບຮົມ Lao GAP ເພື່ອຝຶກອົບຮົມໃຫ້ພະນັກງານກາຍເປັນນັກກວດກາ ແລະ ຜູ້ໃຫ້ຄຳແນະນຳດ້ານເຕັກນິກ.
- ພະນັກງານ ຈຳນວນ 15 ຄົນ ໄດ້ຮັບການແຕ່ງຕັ້ງຈາກກົມປູກຝັງ ແລະ ມີຄວາມຮູ້ດ້ານເຕັກນິກການກວດກາ ແລະ ຂະບວນການຢັ້ງຢືນ GAP.

- Human resources development plan for Lao GAP system operation
- Training curriculum for Lao GAP personnel to become auditors, inspectors and farm advisors
- 15 technical officers assigned by DoA with technical knowledge on Lao GAP inspection and certification process

- ຊາວກະສິກອນ ແລະ ກຸ່ມຜູ້ຜະລິດເປົ້າໝາຍສະໝັກຂໍການຢັ້ງຢືນກະສິກຳທີ່ດີ.
- ຊາວກະສິກອນມີຄວາມຮູ້ ແລະ ທັກສະດ້ານກະສິກຳທີ່ດີ
- ຟາມກະສິກຳທີ່ດີ ໄດ້ຮັບການຢັ້ງຢືນ
- ຂໍ້ມູນກ່ຽວກັບການຢັ້ງຢືນກະສິກຳທີ່ດີ ແລະ ກາໝາຍເພື່ອນຳໃຊ້ເຂົ້າໃນກິດຈະກຳປູກຈິດສຳນຶກໃນດ້ານດັ່ງກ່າວ.
- ພາກເອກະຊົນ ແລະ ຜູ້ບໍລິໂພກເປົ້າໝາຍ ມີຄວາມເຂົ້າໃຈຮ່ວມກັນກ່ຽວກັບກະສິກຳທີ່ດີ.

- Pilot farmers/operators groups to apply for Lao GAP certificate
- Farmers with knowledge and practical skills in Lao GAP production
- Certified Lao GAP production farms
- Comprehensive information on Lao GAP certificate and Lao GAP seal for public awareness raising activities
- Common understanding of Lao GAP among targeted private sectors and consumers

### ກິດຈະກຳ Activities

- ປັບປຸງໂຄງຮ່າງການຈັດຕັ້ງອົງກອນ, ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງໜ່ວຍງານຢັ້ງຢືນ (LCB).
- ພັດທະນາແຜນຈັດສັນບຸກຄະລາກອນ ສຳລັບໜ່ວຍງານຢັ້ງຢືນ (LCB).
- ທົບທວນຍຸດທະສາດ ແລະ ພັດທະນາແຜນພັດທະນາລະບົບການຢັ້ງຢືນ ເພື່ອການດຳເນີນງານໄດ້ຢ່າງຖືກຕ້ອງ ແລະ ເຊື່ອໝັ້ນໄດ້ ຂອງໜ່ວຍງານຢັ້ງຢືນ.

- Revise existing organizational structure, ToR and personnel job description of Lao Certification Body (LCB)
- Develop the plan for personnel allocation of LCB
- Review strategy and develop roadmap toward functioning and trustworthy LCB system

- ພັດທະນາຄູ່ມືຈັດຕັ້ງປະຕິບັດມາດຕະຖານ, ລະບຽບ ແລະ ວິທີການເຮັດວຽກສຳລັບການກວດກາ ແລະ ການຢັ້ງຢືນໃຫ້ສອດຄ່ອງກັບກະສິກຳທີ່ດີອາຊຽນ.
- ພັດທະນາກາໝາຍ ແລະ ລະບຽບການນຳໃຊ້ກາໝາຍ Lao GAP.
- ພັດທະນາຄູ່ມືຝຶກອົບຮົມ ແລະ ເຄື່ອງມືສຳລັບການກວດກາ ແລະ ການຢັ້ງຢືນ.

- Develop Lao GAP standard operating procedures, regulations and work instruction for certification and inspection in line with ASEAN GAP
- Develop Lao GAP seal and seal use regulations
- Develop Lao GAP training curriculum and materials for inspection and certification

- ຈັດທັດສະນະສຶກສາດ້ານລະບົບກະສິກຳທີ່ດີ ໃຫ້ແກ່ ພະນັກງານລະດັບຜູ້ບໍລິຫານ ຂອງ ສປປ ລາວ.
- ປະເມີນຄວາມຕ້ອງການບຸກຄະລາກອນທີ່ມີຄວາມສາມາດ ແລະ ພັດທະນາແຜນການສ້າງບຸກຄະລາກອນ
- ສ້າງຄວາມເຂັ້ມແຂງດ້ານວິຊາການ ໃຫ້ແກ່ພະນັກງານວິຊາການຢ່າງໜ້ອຍ 15 ຄົນ ໂດຍຜ່ານການຝຶກອົບຮົມຢູ່ພາຍໃນ ແລະ ຕ່າງປະເທດ ກ່ຽວກັບມາດຕະຖານກະສິກຳທີ່ດີ (ລະບົບການຮັບຮອງ, ການຢັ້ງຢືນ ແລະ ການກວດກາ).

- Conduct study visit for high-level decision makers of Lao PDR on GAP system
- Conduct need assessment of Lao GAP personnel competency and develop human resources management plan
- Provide capacity building for at least 15 technical staff through in-country and international training on GAP system (accreditation, certification, inspection)

- ສ້າງຕັ້ງກຸ່ມຊາວກະສິກອນ/ຜູ້ຜະລິດ ເພື່ອເປັນກຸ່ມແບບຢ່າງດ້ານການຢັ້ງຢືນກະສິກຳທີ່ດີ (Lao GAP).
- ຊ່ວຍເຫຼືອທີ່ປຶກສາຟາມ ໃນການຝຶກອົບຮົມ ແລະ ໃຫ້ຄຳປຶກສາແກ່ຊາວກະສິກອນ.
- ລົງກວດກາຟາມຂອງກຸ່ມຜູ້ຜະລິດເປົ້າໝາຍ ໂດຍນັກກວດກາທີ່ໄດ້ຜ່ານການຝຶກອົບຮົມເພື່ອໃຫ້ໜ່ວຍງານອອກໃບຢັ້ງຢືນ.
- ສ້າງຂໍ້ມູນ ແລະ ເຄື່ອງມືສື່ສານເພື່ອປະຊາສຳພັນຂໍ້ມູນກ່ຽວກັບ Lao GAP.
- ຈັດກິດຈະກຳປູກຈິດສຳນຶກ ແລະ ການປະຊາສຳພັນກ່ຽວກັບລະບົບການກວດກາ ແລະ ຢັ້ງຢືນ ພ້ອມທັງກາໝາຍ Lao GAP.

- Set up farmer/operator pilot groups to apply for Lao GAP certificate
- Support farm advisors in providing Lao GAP production training and coaching to the pilot farmers
- Inspect and audit the pilot farms by the trained inspectors and auditors to be certified by LCB
- Develop common Lao GAP information and public relation materials
- Conduct awareness raising activities and public campaign on Lao GAP inspection and certification and Lao GAP seal